ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
---=== 000 ===---

ແຂວງ ອັດຕະປື

ເລກທີ 581..../ຈຂ.ອປ
ອັດຕະປື, ວັນທີ 15-6-2016

# ຄຳສັ່ງ

ເຖິງ: ທ່ານ ເຈົ້າເມືອງ 05 ຕົວເມືອງ,ທ່ານ ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ພະແນກ ອຸສະຫະກຳ ແລະ ການຄ້າແຂວງ, ໂຮງງານປຸງແຕ່ງໄມ້, ບັນດາຫົວໜ່ວຍທຸລະກິດການຂົນສົ່ງ ,ຜູ້ປະກອບການຂົນສົ່ງ ໄມ້ ແລະ ຜູ້ປະກອບການຂຸດຄົ້ນໄມ້ ທີ່ເຄື່ອນໄຫວຢູ່ພາຍໃນແຂວງ ອັດຕະປື.

ເລື່ອງ: ໃຫ້ຢຸດເຊົາ ການຂົນສົ່ງໄມ້ ທຸກປະເພດ ຜ່ານເສັ້ນທາງປູດິນແດງ ໃນຊ່ວງລະດູຝົນ ຄື: ເລີ່ມແຕ່ ວັນທີ 01 ເດືອນ ມິຖຸນາ ຫາ ວັນທີ 30 ເດືອນ ພະຈິກ ແລະ ກຳນົດ ວັນປິດປ່າ ເພື່ອຢຸດຕິການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ເລີ່ມແຕ່ວັນທີ 31 ເດືອນ ພຶດສະພາ ຫາ ວັນທີ 1 ເດືອນ ຕຸລາ ໃນແຕ່ລະປີ.

- ອີງຕາມ: ກົດໝາຍປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ ໝວດທີ III ມາດຕາ 14 ສະບັບ ເລກທີ 03/ສພຊ, ລົງວັນທີ 01/10/2003 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ: ໃບສະເໜີ ຂອງຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ ............/ຍທຂ.ອປ, ລົງວັນທີ.............
- ອີງຕາມ: ໃບສະເໜີ ຂອງຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ສະບັບເລກທີ ........... /ກປຂ.ອປ, ລົງວັນທີ ...............

ເພື່ອປົກປັກຮັກສາລະບົບເສັ້ນທາງປູດິນແດງ ພາຍໃນແຂວງ ໃຫ້ມີອາຍຸການນຳໃຊ້ງານ ຍາວນານ ແລະ ຫຼຸດຜ່ອນງົບປະມານ ກໍ່ສ້າງສ້ອມແປງ ໃນແຕ່ລະປີ ພ້ອມທັງຮັບປະກັນ ການຄົມມະນາຄົມຂົນສົ່ງ ບໍ່ໃຫ້ຕັດຂາດ ຮັບປະກັນໃຫ້ການເດີນທາງ ມີຄວາມສະດວກ,ວ່ອງໄວ,ປອດໄພ ທັງກຳນົດວັນປິດປ່າ ເພື່ອຢຸດຕິການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ.

**ເຈົ້າແຂວງ ອັດຕະປື ອອກຄຳສັ່ງດັ່ງຕໍ່ໄປນີ້ :**

I <u>ຂົງເຂດ ໂຍທາທິການ ແລະ ຂົນສົ່ງ.</u>

1: ໃຫ້ຢຸດເຊົາການຂົນສົ່ງ ໄມ້ ທຸກປະເພດ ຜ່ານເສັ້ນທາງດິນແດງ ໃນຊ່ວງລະດູຝົນ ເລີ່ມແຕ່ ວັນທີ 01 ເດືອນ ມິຖຸນາ ຫາ ວັນທີ 31 ເດືອນ ພະຈິກ ໃນທຸກໆປີ.

2: ມອບໃຫ້ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ຫ້ອງການໂຍທາ 05 ຕົວເມືອງ ຈັດຕັ້ງຕິດຕາມກວດກາເປັນປົກກະຕິໂດຍໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນເຈົ້າໜ້າທີ່ຕຳຫຼວດຈະລາຈອນ ແລະ ເຈົ້າໜ້າທີ່ປ່າໄມ້.

3: ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ແຈ້ງໃຫ້ຂະແໜງປ່າໄມ້ ແລະ ໜ່ວຍງານຂຸດຄົ້ນໄມ້ ພາຍໃນແຂວງ ໃຫ້ຢຸດການເຄື່ອນຍ້າຍໄມ້ຜ່ານເສັ້ນທາງ ປູດິນແດງໃນຊ່ວງລະດູຝົນ ຄື: ເລີ່ມແຕ່ ວັນທີ 01 ເດືອນ ມິຖຸນາ ຫາ ວັນທີ 31 ເດືອນ ພະຈິກ ໃນທຸກໆປີ.

II <u>ຂົງເຂດ ກະສິກຳ ແລະ ປ່າໄມ້</u>.

1. ໃຫ້ຢຸດຕິການຂຸດຄົ້ນໄມ້ ຢູ່ໃນບ້ອງຕ່າງໆ ແລະ ເຄື່ອງປ່າຂອງດົງ ຢ່າງຊິ້ນເຊີງ ນັບແຕ່ວັນທີ 31 ເດືອນ ພຶດສະພາ ຫາ ວັນທີ 01 ເດືອນ ຕຸລາ ຂອງທຸກໆປີ.
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສະຫຼຸບສັງລວມຕີລາຄາຜົນການຈັດຕັ້ງປະຕິບັດ, ໃນຜ່ານມາດ້ານດີ, ດ້ານອ່ອນ ແລະ ວິທີການແກ້ໄຂ.
3. ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບກັບ ອຳນາດການປົກຄອງ ເມືອງ ແລະ ພາກສ່ວນກ່ຽວຂ້ອງ ຕິດຕາມ ກວດກາ,ຜູ້ປະກອບການຂຸດຄົ້ນໄມ້, ບໍ່ໃຫ້ສວຍໂອກາດລັກລອບຂຸດຄົ້ນໃນຊ່ວງເວລາທີ່ກຳນົດນີ້ຢ່າງເດັດຂາດ.
4. ມອບໃຫ້ ທ່ານ ເຈົ້າເມືອງ 05 ຕົວເມືອງ ຈັດຕັ້ງ ການເຜີຍແຜ່ ເຊື່ອມຊຶມ ແລະ ຊີ້ນຳທຸກພາກສ່ວນກ່ຽວຂ້ອງຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

ຄຳສັ່ງສະບັບນີ້ ແມ່ນມີຜົນສັກສິດນັບແຕ່ມື້ ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ດຣ.ນາມ ວິຍະເກດ

ບ່ອນສົ່ງ:

| | |
|---|---|
| ຄະນະປະຈຳພັກແຂວງ ທ່ານລະ | 01 ສະບັບ. |
| ຫ້ອງວ່າການປົກຄອງແຂວງ | 01 ສະບັບ. |
| ເຈົ້າເມືອງ 05 ຕົວເມືອງຜູ້ລະ | 01 ສະບັບ. |
| ພະແນກ ກະສິກຳ ແລະ ປ່າໄມ້ແຂວງ | 01 ສະບັບ. |
| ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ | 01 ສະບັບ. |
| ບັນດາ ບໍລິສັດ ຜູ້ປະກອບການຂົນສົ່ງ ໄມ້ | 01 ສະບັບ. |
| ພະແນກ ອຸສະຫະກຳ ແລະ ການຄ້າແຂວງ | 01 ສະບັບ |
| ສຳເນົາ | 01 ສະບັບ. |